ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 07 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2017

ສຳນັກງານ ຄຄຊ
ລົງຮັບ
ເລກທີ 0248
ວັນທີ 06 MAR 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 13-17/02/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,20% ທຽບເງິນເອີໂຣ ເນື່ອງຈາກຕົວເລກດັດຊະນີທາງດ້ານຜົນຜະລິດອຸດສາຫະກຳຂອງສະຫະລັດອາເມລິກາ ຫຼຸດລົງຈາກ 0,6% ໃນເດືອນ 12/2016 ມາເປັນ 0,3% ໃນເດືອນ 1/2017. ນອກຈາກນີ້, ຕົວເລກດຸນການຄ້າໃນຂົງເຂດເອີຣົບທີ່ອອກມາເກີນດຸນເພີ່ມຂຶ້ນເປັນ 24,5 ຕື້ເອີໂຣ ໃນເດືອນ 12/2016 ຈາກ 22,2 ຕື້ເອີໂຣ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 10/02/2017 | ອາທິດນີ້ 17/02/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0640 | 1,0661 | -0,20% |
| ໂດລາ/ເຢນ | 113,67 | 113,40 | 0,24% |
| ໂດລາ/ບາດ | 35,070 | 34,98 | 0,26% |
| ໂດລາ/ເປໂຊ | 49,93 | 50,00 | -0,14% |
| ໂດລາ/ຣູເປັຍ | 13.315,00 | 13.328,0 | -0,10% |
| ໂດລາ/ໂດລາສິງກະໂປ | 1,4217 | 1,4166 | 0,36% |
| ໂດລາ/ຢວນ | 6,8795 | 6,8682 | 0,16% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 0,80% ຈາກ 55,06 ໂດລາ/ບາເຣວ ມາເປັນ 54,62 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການນຳໃຊ້ນ້ຳມັນຂອງ ສະຫະລັດອາເມລິກາຫຼຸດລົງ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນຂອງສະຫະລັດອາເມລິກາ

ເພີ່ມຂຶ້ນ 9,5 ລ້ານບາເຣວ ຂອງອາທິດທີ 10/2/2017. ສໍາລັບລາຄາຄໍາ ເພີ່ມຂຶ້ນ 1,07% ເປັນ 1.237,57 ໂດລາ/ອອນ ເນື່ອງຈາກນັກລົງທຶນຫັນມາຊື້ສັນຍາຄໍາເພີ່ມຂຶ້ນ ເຫັນໄດ້ຈາກກອງທຶນຄໍາທີ່ໃຫຍ່ທີ່ສຸດຂອງໂລກ (SPDR) ໄດ້ເຂົ້າຊື້ຄໍາ ເພີ່ມຂຶ້ນ 10,96 ໂຕນ ຈາກ 832,58 ໂຕນ ໃນວັນທີ 10/2/2017 ເປັນ 843,54 ໂຕນ ໃນວັນທີ 16/2/2017 ບວກ ກັບການອ່ອນຄ່າຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,04% ແລະ ອ່ອນຄ່າ 0,45% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,85% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 4,00% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 10/02/2016 | | | ອາທິດນີ້ 17/02/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.313,80 | 8.351,17 | 8.325,51 | 8.308,77 | 8.353,00 | 8.331,61 | 0,06% | -0,02% | -0,04% | -1,95% | -1,74% | -1,85% |
| ບາດ | 235,91 | 237,78 | 237,04 | 237,23 | 238,67 | 238,12 | -0,55% | -0,38% | -0,45% | -4,03% | -4,06% | -4,00% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ຫຼຸດລົງ 0,83% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,26%;
- ປະລິມານເງິນ M2 ຫຼຸດລົງ 0,10% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,28%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາອາທິດ (10-16/02/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 37,06 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 53,13 ລ້ານໂດລາ ແລະ ຂາຍໂດລາໄດ້ 16,07 ລ້ານໂດລາ) ແລະ ຊື້-ຂາຍເງິນບາດສຸດທິ 1.202,17 ລ້ານບາດ (ໃນນີ້ ຊື້ບາດໄດ້ 318,67 ລ້ານບາດ ແລະ ຂາຍບາດໄດ້ 1.520,84 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ຫຼຸດລົງ 20,73% ແຕ່ ສໍາລັບເງິນບາດເພີ່ມຂຶ້ນ 10,17%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈໍານວນ 15,10 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈໍານວນ 12 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈໍານວນ 2,49 ລ້ານໂດລາສະຫະລັດ ແລະ ເງິນບາດ 45,45 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 03-09/2/2017 | | ອາທິດທີ 13-17/2/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **53,16** | **187,06** | **53,13** | **318,67** | **-0,06%** | **70,36%** |
| - ທ/ຄທຸລະກິດລັດ | 9,98 | 142,30 | 11,52 | 122,79 | 15,43% | -13,71% |
| - ທ/ຄທຸລະກິດອື່ນໆ | 43,18 | 44,76 | 41,61 | 195.88 | -3,64% | 337,62% |
| **2. ການຂາຍເງິນຕາຕ່າງປະເທດ** | **34,14** | **1.482,67** | **16,07** | **1.520,84** | **-52,93%** | **2,57%** |
| - ທ/ຄທຸລະກິດລັດ | 17,63 | 176,50 | 9,74 | 147,36 | -44,75% | -16,51% |
| - ທ/ຄທຸລະກິດອື່ນໆ | 16,51 | 1.306,17 | 6,33 | 1.373,48 | -61,66% | 5,15% |
| **ຊື້-ຂາຍສຸດທິ ທທກ** | **19,02** | **-1.295,61** | **37,06** | **-1,202.17** | **94,85%** | **-7,21%** |
| - ຜິດດ່ຽງ ຊື້-ຂາຍ | 35,78% | -692,62% | 69,75% | -377.25% | 94,96% | -45,53% |
| - ມູນຄ່າການຊື້-ຂາຍ | **87,30** | **1.669,73** | **69,20** | **1,839.51** | **-20,73%** | **10,17%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-7,00** | **5,90** | **-15,10** | **-12,00** | | |
| - ທຫລ ຊື້ຈາກ ທທກ | 0,05 | 10,00 | 1,20 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 7,05 | 4,10 | 16,30 | 12,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,20** | **38,99** | **2,49** | **45,45** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0** | **0** | **0** | **0** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0 | 0 | 0 | 0 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0 | 0 | 0 | 0 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ໃນເດືອນ 01/2017 ຢູ່ໃນລະດັບ 2, 27% ຫຼຸດລົງຈາກ 2,49% ໃນເດືອນ 12/2016.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າປະເທດ ເພີ່ມຂຶ້ນ 4,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 67,94 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 857 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 155 ສະບັບ ເທົ່າກັບ 22,07% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 434,02 ຕື້ກີບ ເພີ່ມຂຶ້ນ 24,18 ຕື້ກີບ ເທົ່າກັບ 5,90% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/2/2017) ມີທັງໝົດ 2.409 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.328 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈາກ 436,47 ຕື້ກີບ ມາເປັນ 757, 24 ຕື້ກີບ ເທົ່າກັບ 136,06%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 81 ຄັ້ງ, ມູນຄ່າການໂອນ 120,84 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.051,12 ຈຸດ ເພີ່ມຂຶ້ນ 1,62% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 234.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 887,8 ລ້ານກີບ ເພີ່ມຂຶ້ນ 33,83% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,17% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 06-10/2/2017 | ດັດຊະນີອາທິດທີ 13-17/2/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.032,47 | 1.051,12 | 1,62% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 13.800 | 78.620.000 | 5.697 | 32.500 | 185.550.000 | 5.709 | 135,51 | 136,01 | 12 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 41.000 | 209.490.000 | 5.110 | 92.900 | 471.465.000 | 5.075 | 126,59 | 125,05 | -35 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 5.800 | 0 | 0 | 5.800 | - | - | - |
| ບໍລິສັດປິໂຕລ້ຽມເທລດ ດິ້ງລາວ ມະຫາຊົນ | 155.100 | 374.670.000 | 2.416 | 108.000 | 228.090.000 | 2.112 | -30,37 | -39,12 | -304 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 200 | 620.000 | 3.100 | 900 | 2.700.000 | 3.000 | 350 | 335,48 | -100 |
| ທັງໝົດ | **210.100** | **663.400.000** | | **234.300** | **887.805.000** | | 11,52 | 33,83 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- **ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມສອງຝ່າຍລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານແຫ່ງລັດຫວຽດນາມ ທີ່ (ທຫລ); ❷ ກອງປະຊຸມວຽກງານກວດກາບັນຊີ ແລະ ກວດນັບຊັບສິນບັດ ປະຈຳປີ 2016 ທີ່ (ທຫລ).
- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການກຳນົດລາຄາສິນຄ້າ ແລະ ມາດຕະການຄຸ້ມຄອງລາຄາສິນຄ້າໃນຕໍ່ໜ້າ ທີ່ (ຫສນຍ); ❷ ກອງປະຊຸມສຳມະນາໃນຫົວຂໍ້ "The 17th Currency Conference" ຊຶ່ງຈັດຂຶ້ນໃນລະຫວ່າງວັນທີ 14-17 ກຸມພາ 2017 ທີ່ (ປະເທດມາເລເຊຍ).

- ຮັບຕ້ອນການເຂົ້າຢ້ຽມຂໍ່ານັບຄະນະນໍາຂອງ ທຫລ ເປັນຕົ້ນແມ່ນ ທ່ານ ປະທານບໍລິຫານກຸ່ມບໍລິສັດການເງິນເຄບີ ແລະ ທະນາຄານກຸກມິນ ສ.ເກົາຫຼີ ແລະ ຄະນະຂອງ AMRO.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.
- ສືບຕໍ່ຕິດຕາມການກະກຽມໃຫ້ແກ່ການຫັນບໍລິສັດ ໂທລະຄົມມະນາຄົມລາວ (LTC) ເປັນບໍລິສັດມະຫາຊົນ ເພື່ອກະກຽມຈໍາໜ່າຍຮຸ້ນຄັ້ງທໍາອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ;
- ສືບຕໍ່ລົງຕິດຕາມການປະຕິບັດມາດຕະການຊົ່ວຄາວ ທີ່ ທະນາຄານ ພັດທະນາລາວແລະ ທະນາຄານ ສົ່ງເສີມກະສິກໍາ.
- **ກະກຽມຈັດກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກອງປະຊຸມສະຫຼຸບວຽກງານກ່ຽວກັບສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍ່ຮັບເງິນຝາກ ທີ່ (ICTC ) ; ❷ ກອງປະຊຸມຄະນະຮັບຜິດຊອບກວດກາການປະເມີນການຈັດຕັ້ງປະຕິບັດແຜນງານ-ໂຄງການຂອງ ທຫລ ໄລຍະ 5 ປີ 2016-2020 ທີ່ (ທຫລ);
- **ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ກອງປະຊຸມນາຍົກ-ຮອງນາຍົກປະຈໍາເດືອນ ກຸມພາ 2017 ທີ່ (ຫສນຍ); ❷ ກອງປະຊຸມຄະນະລັດຖະບານ ສະໄໝວິສາມັນ ປະເດືອນ ກຸມພາ 2017; ❸ ກອງປະຊຸມລາຍງານສະພາບການຈັດຕັ້ງປະຕິບັດ ແລະ ແກ້ໄຂຄວາມທຸກຍາກ ເພື່ອການພັດທະນາ ແລະ ສະໜອງທຶນໃຫ້ແກ່ວິສະຫະກິດຂະໜາດນ້ອຍ ແລະ ກາງ ທີ່ (ສະພາແຫ່ງຊາດ); ❸ ກອງປະຊຸມສໍາມະນາລະຫວ່າງທະນາຄານແຫ່ງ ສປປ ລາວ ກັບທະນາຄານກາງເຢຍລະມັນ ທີ່ (ທຫລ).
- ຄະນະຜູ້ວ່າການ ທຫລ ໄປບໍາລຸງພາສາຫວຽດນາມ ຢູ່ປະເທດ ສສ. ຫວຽດນາມ (ໄລຍະ 3 ເດືອນ).

ໄ ຫົວໜ້າຫ້ອງການ

ສຸກັນ ຈັນທະວົງ